ການນຳສະເໜີຢ່າງມີຄວາມໝັ້ນໃຈ

ໃນວັນທີ 30 ພຶດສະພາ 2019, ທີ່ ໂຮງແຮມຄາວພາຊາ, ນະຄອນຫລວງວຽງຈັນ

ການນຳສະເໜີວຽກງານຕ່າງໆ ບໍ່ວ່າຈະເປັນການນຳສະເໜີໃຫ້ກັບຫົວໜ້າ, ການນຳສະເໜີທີ່ປະຊຸມກັບທີມງານ, ຫຼື ການນຳສະເໜີໃຫ້ກັບຄົນກຸ່ມໃຫຍ່ກໍ່ຕາມ, ການນຳສະເໜີວຽກງານດ້ວຍຄວາມໝັ້ນໃຈນັ້ນມີຄວາມຈຳເປັນ ເຊິ່ງມັນຈະຊ່ວຍໃຫ້ການນຳເໜີຂອງເຈົ້າໄດ້ຖືກຮັບຟັງແລະມັນຍັງຈະຊ່ວຍໃຫ້ວຽກງານຂອງເຈົ້າມີຄວາມກ້າວໜ້າ. ບໍ່ວ່າການນຳສະເໜີຂອງເຈົ້າຈະເປັນພາສາອັງກິດ ຫຼື ພາສາລາວກໍ່ຕາມ, ຫຼັກສູດນີ້ຈະຊ່ວຍໃຫ້ເຈົ້າໄດ້ຮຽນຮູ້ທັກສະຕ່າງໆທີ່ຈຳເປັນເພື່ອເຮັດໃຫ້ການນຳສະເໜີວຽກງານຂອງເຈົ້າອອກມາເດັ່ນທີ່ສຸດທີ່ເຈົ້າສາມາດເຮັດໄດ້.

ການຝຶກອົບຮົມ 1ວັນໃນຄັ້ງນີ້ຈະຊ່ວຍໃຫ້ທ່ານຮູ້ຈັກໃນການນຳໃຊ້ເຕັກນິກງ່າຍໆທີ່ຈະຊ່ວຍທ່ານປາສະຈາກຄວາມກັງວົນແລະຮູ້ວິທີການຈັດລະບຽບການນຳສະເໜີຂໍ້ມູນດ້ວຍຄວາມໝັ້ນໃຈສູງຂຶ້ນ.

ທ່ານຈະໄດ້ຮຽນຮູ້ທັກສະກ່ຽວກັບ:

* ການກະກຽມຢ່າງມີປະສິດຕິພາບສຳລັບການນຳສະເໜີທຸກໆຮູບແບບ;
* ອອກແບບສະໄລສ PowerPoint ຢ່າງມີປະສິດຕິພາບ ແລະ ການຊອກຫາເອກະສານເພີ້ມເຕີມ;
* ເຄັດລັບການສ້າງຄວາມປະທັບໃຈກ່ອນການນຳສະເໜີ, ຈູງໃຈຜູ້ຟັງໃຫ້ມີສ່ວນຮ່ວມ ແລະ ປິດທ້າຍການນຳສະເໜີຢ່າງມີປະສິດຕິພາບ;
* ເຄັດລັບການດຶງຄວາມໝັ້ນໃຈຂຶ້ນມາເຖິງແມ່ນວ່າເຈົ້າຈະບໍ່ໝັ້ນໃຈຫຼືວ່າມີຄວາມວິຕົກກັງວົນ;
* ທັກສະການຮັບມືເວລາຜູ້ຟັງຖາມຄຳຖາມທີ່ຍາກທີ່ສຸດ;
* ທັກສະການສ້າງວິທີການນຳສະເໜີລາຍງານໃນຮູບແບບສ່ວນຕົວຂອງເຈົ້າ.

ຜູ້ເຂົ້າຮ່ວມເປົ້າໝາຍ

ຫຼັກສູດນີ້ເໝາະສຳລັບ:

* ຜູ້ຈັດການ/ຫົວໜ້າສາຍງານທີ່ຫາກໍ່ເຄີຍນຳສະເໜີການລາຍງານເປັນຄັ້ງແລກ
* ເໝາະສຳລັບຜູ້ນຳທີ່ຕ້ອງການເພີ້ມພູນທັກສະການນຳສະເໜີໃຫ້ມີປະສິດຕິພາບກ່ວາເກົ່າ
* ບຸກຄົນຜູ້ທີ່ຕ້ອງໄດ້ນຳສະເໜີກ່ຽວກັບວຽກງານເປັນປະຈຳ

ພາສາທີ່ໃຊ້ໃນການຝຶກອົບຮົມ
ການຝຶກອົບຮົມໃນຄັ້ງນີ້ແມ່ນຈະຖືການນຳສະເໜີເປັນພາສາລາວ

ຜູ້ຝຶກອົບຮົມ

ພອນປະສິດ ເພັ່ງວິໄລ
ພອນປະສິດມີປະສົບການຫຼາຍກ່ວາ 10 ປີໃນຂະແໜງການຝຶກອົບຮົມ ແລະ ພັດທະນາຊັບພະຍາກອນມະນຸດ ແລະ ຍັງມີບົດບາດສຳຄັນການໃນການຝຶກອົບຮົມ ແລະ ພັດທະນາໃນຂະແໜງການບໍລິຫານໂຮງແຮມ ແລະ ການບໍລິການໃນນະຄອນຫຼວງວຽງຈັນ. ແນວຄິດປະຈຳໃຈຂອງພອນປະສິດທີ່ເວົ້າເຖິງກ່ຽວກັບຂະແໜງທຸລະກິດ ແລະ ພະນັກງານທົ່ວໄປແມ່ນ, (ມີແຕ່ໃສ່ໃຈພັດທະນາຄວາມອາດສາມາດຂອງຕົນເອງເທົ່ານັ້ນ ເຈົ້າຈຶ່ງຈະປະສົບຜົນສຳເລັດໃນຊີວິດຕາມຄວາມມຸ່ງມາດປາດຖະໜາຂອງເຈົ້າ).

ໂທນີ ແຄມເບວ
ໂທນີໃຊ້ເວລາກ່ວາ 30 ປີໃນການຝຶກອົບຮົມນັກທຸລະກິດທົ່ວໂລກເພື່ອຊ່ວຍພວກເຂົາເລົ່ານັ້ນໃຫ້ມີທັກສະການນຳສະເໜີທີ່ສຸດຍອດ. ໂທນີດຳເນີນການຈັດສຳມະນາ ແລະ ຝຶກອົບຮົມໃນອາຊີ, ເອີລົບ, ອາເມລິກາເໜືອ ແລະ ອ໋ອດສະເຕເລຍ ເຊິ່ງການຝຶກອົບຮົມດັ່ງກ່າວນັ້ນແມ່ນຈັດໃຫ້ກັບບັນດາຂະແໜງການທີ່ໃຫຍ່ລະດັບໂລກແລະມີຫຼາກຫຼາຍອຸດສາຫະກຳແລະຂະແໜງການ. ໂດຍລວມສ່ວນໃຫຍ່ແລ້ວ ການຝຶກອົບຮົມທີ່ໂທນີຈັດຂຶ້ນແຕ່ລະຄັ້ງລ້ວນແລ້ວແຕ່ສະໜຸກສະໜານ, ມີສາລະ ,ມີສ່ວນຮ່ວມຢ່າງຫຼາກຫຼາຍ ແລະ ຍັງສາມາດຊ່ວຍໃຫ້ຜູ້ເຂົ້າຝຶກອົບຮົມໄດ້ມີການພັດທະນາຕົນເອງຢ່າງແທ້ຈິງ.

ລົງທະບຽນ ແລະ ສອບຖາມຂໍ້ມູນເພີ່ມເຕີ່ມ ທີ່
ຫ້ອງການສະພາການຄ້າ ແລະ ອຸດສາຫະກຳ ເອີຣົບປະຈຳລາວ
Tel: + 856 21 264330, Fax: +856 21 264331
Email: xayoudone.aphayyavong@eccil.org, sem.eccil@gmail.com,
www.eccil.org